# ພິທີລົງນາມສັນຍາ

ວ່າດ້ວຍ ການສະໜັບສະໜູນທາງດ້ານການເງິນ ລະຫວ່າງ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ ແລະ ທະນາຄານ ເພື່ອການສົ່ງອອກ ແລະ ນຳເຂົ້າ ແຫ່ງປະເທດໄທ ເພື່ອສະໜອງເງິນທຶນໃຫ້ແກ່ ບໍລິສັດ ເບທາໂກຣ ລາວ ອາຫານສັດ ຈຳກັດ.




## ໃນຕອນເຊົ້າ ວັນອັງຄານ ວັນທີ 08 ກໍລະກົດ 2025

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ມີພິທີລົງນາມ ໃນສັນຍາວ່າດ້ວຍ ການສະໜັບສະໜູນທາງດ້ານການເງິນ ລະຫວ່າງ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ແລະ ທະນາຄານ ເພື່ອການສົ່ງອອກ ແລະ ນຳເຂົ້າ ແຫ່ງປະເທດໄທ (EXIM Bank Thailand) ເພື່ອສະໜອງເງິນທຶນໃຫ້ແກ່ ບໍລິສັດ ເບທາໂກຣ ລາວ ອາຫານສັດ ຈຳກັດ (Betagro Lao)




ໃຫ້ກຽດເຂົ້າຮ່ວມ ເປັນສັກຂີພະຍານໃນພິທີດັ່ງກ່າວ ໂດຍ ທ່ານ ສຸລິວັດ ສຸວັນນະຈູມຄຳ ຮອງລັດຖະມົນຕີ ກະຊວງການເງິນ ສປປ ລາວ ທັງເປັນ ປະທານສະພາບໍລິຫານ ທຄຕລ, ມີ ທ່ານ ນາງສາຍສະໝອນ ຈັນທະຈັກ ຜູ້ອຳນວຍການ ທຄຕລ ແລະ ທ່ານ ບັນດິດ ສະເພຍໄຊ ຮັກສາການກຳມະການຜູ້ຈັດການ EXIM Bank Thailand, ທ່ານ ສຸຣະເຊດ ທອງບຸນລ້ອມ ຮອງກຳມະການຜູ້ຈັດການໃຫຍ່ ກຸ່ມເບທາໂກຣ ປະເທດລາວ ແລະ ມຽນມາ ເປັນຜູ້ລົງນາມ ເພື່ອສະໜັບສະໜູນ ບໍລິສັດ ເບທາໂກຣ ລາວ ອາຫານສັດ ຈຳກັດ ເພື່ອຂະຫຍາຍການລົງທຶນໃນ ສປປ ລາວ ເປັນສະກຸນເງິນກີບ ເຊິ່ງທາງ ທຄຕລ ຈະເປັນຜູ້ປ່ອຍເງິນກູ້ໃຫ້ ໂດຍມີ Standby Letter of Credit (SBLC) ຈາກ EXIM Bank Thailand ເປັນຫຼັກຊັບຄໍ້າປະກັນ.



ການລົງນາມສັນຍາໃນຄັ້ງນີ້ ນັບເປັນຄວາມສໍາເລັດຂອງການຮ່ວມມືລະຫວ່າງ ທຄຕລ ແລະ ທະນາຄານ ເພື່ອການສົ່ງອອກ ແລະ ນໍາເຂົ້າ ແຫ່ງປະເທດໄທ ເພື່ອສະໜັບສະໜູນໃຫ້ນັກລົງທຶນ ຈາກປະເທດໄທ ທີ່ເຂົ້າມາລົງທຶນໃນ ສປປ ລາວ ໂດຍນໍາໃຊ້ເງິນກີບເປັນເງິນສະກຸນຫຼັກ ໃນການດໍາເນີນທຸລະກິດ ແລະ ໝູນວຽນໃນກິດຈະການ ເພື່ອແນ່ໃສ່ການຫຼຸດຜ່ອນຄວາມສ່ຽງທາງດ້ານອັດຕາແລກປ່ຽນ, ເສີມສ້າງສະພາບຄ່ອງດ້ານການດໍາເນີນທຸລະກິດ, ສົ່ງເສີມການຄ້າ ແລະ ການລົງທຶນ ລະຫວ່າງ ໄທ ກັບ ສປປ ລາວ ໃຫ້ເຂັ້ມແຂງ ແລະ ແຂ່ງຂັນໄດ້ ໃນຕະຫຼາດການຄ້າລະຫວ່າງປະເທດ ພ້ອມທັງແນ່ໃສ່ສົ່ງເສີມການດໍາເນີນທຸລະກິດໂດຍຄໍານຶງເຖິງ ສິ່ງແວດລ້ອມ, ສັງຄົມ ແລະ ການບໍລິຫານທຸລະກິດທີ່ມີປະສິດທິພາບ (Environmental, Social, and Governance: ESG) ຕໍ່ຍອດການພັດທະນາຢ່າງຍືນຍົງໃນພາກພື້ນລຸ່ມແມ່ນໍ້າຂອງ ແລະ ຂອງໂລກໂດຍລວມ.

